# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 3 ມີກາຄົມ 2021 (01-03-2021)

---

## ເອົາຊະນະຄວາມກັງວົນ

*ທ່ານຈະບັນລະຍາຍຊີວິດທີ່ບໍ່ມີຄວາມກັງວົນແນວໃດ?*

**ຈຸດສຳຄັນໃນບົດຮຽນ:** ການສະຖິດນຳຂອງພຣະເຈົ້າໃຫ້ທົນທາງ ອອກຈາກຄວາມກັງວົນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ໂລກນຳຄວາມກັງວົນມາໃຫ້ເຮົາຢ່າງມາກມາຍເຊັ່ນ: ການກໍ່ການຮ້າຍ, ຄວາມເຄັ່ງຕຶງຂອງໂລກ, ເສຖກິດຂຶ້ນໆລົງໆ, ແລະການອາຊະຍາກັມ. ສະຖານະການຂອງໂລກຈະດີຂຶ້ນຫຼືເລວຮ້າຍລົງປີໜ້າໃນເວລານີ້? ພວກເຮົາປະສົບກັບຄວາມກັງວົນຫຼາຍຢ່າງ ຢູ່ອ້ອມແອ້ມເຮືອນເຮົາເໝືອນກັນ. ພວກເຮົາກັງວົນນຳຄວາມປອດພັຍຂອງລູກເຮົາ, ສຸຂພາບເຮົາ, ການບຳນານ, ວຽກທີ່ຕ້ອງການຕາມຄຳສັ່ງແລະເຖິງອັນຄົບກຳນົດ, ແລະຍັງມີຕໍ່ໆໄປ. ພວກເຮົາຮູ້ດີວ່າເຮົາບໍ່ຄວນກັງວົນ ແຕ່ຂ້າພະເຈົ້າຢາກໃຫ້ເຫດຜົນທີ່ເຮົາບໍ່ຕ້ອງກັງວົນ: <u>ມັນບໍ່ດີສຳລັບທ່ານ</u>. ອີງຕາມການວິຈັຍຂອງອົງການອານາມັຍແຫ່ງຊາດພົບວ່າ ຄວາມຕຶງຄຽດເລື້ອລັງ ແລະ ຄວາມກັງວົນພາໃຫ້ ລະບົບພູມຕ້ານທານອ່ອນເພັຽ, ເຮັດໃຫ້ທ່ານຮູ້ສຶກຄືກັບວ່າເປັນໄຂ້ ຫຼື ຕິດເຊື້ອອື່ນໆ. ຄວາມກັງວົນພາໃຫ້ເກີດຄວາມດັນໂລຫິດສູງ, ໂຣກກະເພາະ, ກົດຢຸດໄຫຼ, ເສັ້ນເລືອດຕັບໃນຫົວໃຈ, ແສບລຳໄສ້, ປວດຫຼັງ, ເຈັບຫົວ, ທັນໃຈຝືດ, ແມ້ກະທັ້ງ ສະພາບຜິວໜັງ. ເຣື່ອງໃຫ່ຍ! ດຽວນີ້ຂ້າພະເຈົ້າມີສິ່ງອື່ນທີ່ຕ້ອງກັງວົນອີກຄື: ຄວາມກັງວົນ!

ແມ້ກະທັ້ງຄົນທີ່ຄິດວ່າ "ເປັນຄົນກັງວົນໂດຍກຳເນີດ," ຢາແກ້ຜິດມີຄື: ການວາງໃຈໃນພຣະເຈົ້າ. ເພງສັຣເສີນບົດ 23 ວາດພາບໃຫ້ເຮົາເຫັນຄວາມໝາຍຂອງການປະຖິ້ມຄວາມກັງວົນອອກໄປແລະພັກຜ່ອນໃນພຣະເຈົ້າ, ພຣະຜູ້ລ້ຽງທີ່ຮັກຜູ້ຊຶ່ງຫ່ວງໃຍເຮົາຕລອດເວລາ.

**ພຣະຄັມພີກ່າວວ່າແນວໃດ :** ( ເບິ່ງຕາມຂໍ້ 1, 2, ແລະ 3, )

### ການສຶກສາພຣະຄັມພີ

### 1. ເພງສັຣເສີນ 23:1-3.

*1ພຣະຜູ້ເປັນເຈົ້າຊົງເປັນຜູ້ລ້ຽງຂ້ານ້ອຍ ຂ້ານ້ອຍມີທຸກສິ່ງທີ່ຂ້ານ້ອຍຕ້ອງການ 2ພຣະອົງຊົງພາຂ້ານ້ອຍໃຫ້ພັກເຊົາ*
*ຢູ່ໃນປ່າຫຍ້າອັນຂຽວສົດ ພຣະອົງຊົງພາຂ້ານ້ອຍໄປໃນບ່ອນມີບໍ່ນ້ຳອັນສົດໃສແລະງຽບສງັດ 3ພຣະອົງຊົງໃຫ້ຂ້າ*
*ນ້ອຍມີແຮງຂຶ້ນໃໝ່ ແລະຊົງພາຂ້ານ້ອຍໄປໃນທາງທີ່ຖືກຕ້ອງ ຕາມທີ່ພຣະອົງຊົງສັນຍາໄວ້.*

ການສະຖິດນຳຂອງພຣະເຈົ້າເປັນພະລັງເລົ້າໂລມໃຈທີ່ດີທີ່ສຸດທີ່ພວກເຮົາມີ ເມື່ອຄວາມກັງວົນເກີດຂຶ້ນ. ເພງສັຣເສີນ 23 ເປັນພາບອັນສວຍງາມຂອງການສະຖິດນຳຂອງພຣະເຈົ້າຜູ້ຊົງຮັກ, ທີ່ຊ່ອຍອະທິບາຍວ່າເຫດໃດເພງສັຣເສີນບົດຊາວສາມຈຶ່ງເປັນທີ່ຮູ້ຈັກຢ່າງກ້ວາງຂວາງແລະມັກຫຼາຍ. ມັນຢໍ້າເຕືອນເຮົາວ່າ ເມື່ອເຮົາປະເຊີນກັບ ຄວາມໂຫດຮ້າຍຂອງຊີວິດ, ພຣະເຈົ້າຈະສະຖິດນຳເພື່ອນຳພາແລະເລົ້າໂລມໃຈເຮົາ.

ທ່ານດາວິດຂຽນເພງສັຣເສີນບົດນີ້, ແຕ່ເຮົາບໍ່ຮູ້ວ່າເພິ່ນຂຽນຂຶ້ນຍາມໃດ. ອາດເປັນເວລາທີ່ເພິ່ນຍັງເປັນເດັກລ້ຽງແກະ, ເວລາທີ່ເພິ່ນຖືກຕາມລ່າແລະຢ້ານກົວກ່ອນເພິ່ນກາຍມາເປັນກະສັດຂອງຊາວອິສຣາເອນ, ຫຼືຕອນທີ່ເພິ່ນຊະລາຫຼຽວຄືນຫຼັງເບິ່ງຊີວິດການປົກຄອງຂອງເພິ່ນພາຍໃຕ້ຣິດອຳນາດຂອງພຣະເຈົ້າ. ບໍ່ວ່າເພິ່ນຈະຂຽນເວລາໃດ, ເພງສັຣເສີນຂອງເພິ່ນຖືກຮ້ອງໂດຍຄົນເຮັບເຣີແລະຖືກຫຼາຍຄົນນຳມາໃຊ້ໃນຍາມພົບກັບຄວາມວິຕົກກັງວົນ-ຢໍ້າເຕືອນເຮົາວ່າພຣະເຈົ້າຊົງເປັນຜູ້ລ້ຽງຂອງເຮົາ. ທ່ານດາວິດຢໍ້າເຕືອນເຮົາສາມສິ່ງທີ່ພຣະເຈົ້າໄດ້ຊົງກະທຳເພື່ອເຮົາໃນຖານະພຣະຜູ້ລ້ຽງ.

**1. ພຣະອົງນຳພາເຮົາ.** ຕາມທັມມະຊາດ, ແກະບໍ່ສລາດເລີຍ. ພວກເຂົາປ່ວງໄປຢ່າງໄຮ້ເປົ້າໝາຍ, ເອົາຕົນເຂົ້າໄປສູ່ຄວາມຍາກລຳບາກຄັ້ງແລ້ວຄັ້ງເຫຼົ່າ. ພວກຜູ້ລ້ຽງແກະໃຊ້ໄມ້ມີຂໍທາງປາຍມີເຫດຜົນວ່າ: ເພື່ອເຂົາສາມາດເກາະລາກເອົາແກະອອກຈາກຂຸມ ຫຼື ທ່ອມພູເມື່ອເຂົາຕົກລົງໄປ-ຊຶ່ງເປັນຄຳອຸປມາທີ່ດີ ຕໍ່ຊີວິດເຮົາ.

ຍາມເມື່ອ, ພວກເຮົາປະເຊີນກັບຄວາມເຈັບປວດແລະສູ້ຊົນກັບຊີວິດ, ແລ້ວສິ່ງທີ່ເຮົາຢາກໄດ້ກໍແມ່ນການບັນເທົາທຸກ. ແຕ່ອົງພຣະຜູ້ເປັນເຈົ້າປະສົງຍິ່ງກວ່ານັ້ນສຳລັບເຮົາ. ພຣະອົງບໍ່ພຽງແຕ່ຢາກໃຫ້ເຮົາກັບຄືນສູ່ສະພາບເດີມບ່ອນຊຶ່ງພາໃຫ້ເຮົາກັງວົນນັ້ນຫາຍໄປຢ່າງສິ້ນເຊີງເທົ່ານັ້ນ. ແທນທີ່ຈະເຮັດດັ່ງນັ້ນ, ພຣະອົງປະສົງນຳເຮົາມາສູ່ "ເສັ້ນທາງອັນຖືກຕ້ອງ" ຊຶ່ງຈະພາເຮົາໄປສູ່ຄວາມຍິນດີໃນການສະຖິດນຳຂອງພຣະອົງ ແລະພັນທະກິດຂອງພຣະອົງ. ພຣະຜູ້ລ້ຽງພວກເຮົາບໍ່ພຽງແຕ່ປະສົງກູ້ພັຍເຮົາເທົ່ານັ້ນ; ພຣະອົງປະສົງເສີມສ້າງເຮົາໃໝ່ພ້ອມ.

**2. ພຣະອົງຈັດຫາໃຫ້ເຮົາ.** ຜູ້ລ້ຽງແກະບໍ່ພຽງແຕ່ຮັກສາແກະຈາກພັຍອັນຕະລາຍເທົ່ານັ້ນ; ເຂົາຍັງຈັດຫາສິ່ງຈຳເປັນສຳລັບແກະອີກດ້ວຍ. ພຣະເຈົ້າເຮັດຢ່າງດຽວກັນເພື່ອເຮົາ. ຜູ້ຂຽນເພງສັຣເສີນຂຽນວ່າ, "ຂ້ານ້ອຍມີທຸກສິ່ງທີ່ຂ້ານ້ອຍຕ້ອງການ." ພຣະເຈົ້າຊົງເປັນຜູ້ລ້ຽງແກະປະເສີດຊຶ່ງພວກເຮົາມີທຸກສິ່ງທີ່ເຮົາຕ້ອງການໃນພຣະອົງ.

ທ່ານອັຄສາວົກໂປໂລເຂົ້າໃຈວ່າຄວາມຕ້ອງການມີຄວາມໝາຍຢ່າງໃດ. ຈຸດນຶ່ງໃນການຮັບໃຊ້ຂອງເພິ່ນ, ເວລາເພິ່ນຕິດຄຸກ, ເພິ່ນໄດ້ຂຽນຈົດໝາຍສະບັບນຶ່ງເຖິງຄຣິສຕະຈັກໃນເມືອງຟີລິບປອຍ. ຫົວເຣື່ອງຂອງຈົດໝາຍນັ້ນແມ່ນຄວາມຍິນດີ. ຂຽນຈາກຫ້ອງຂັງຂອງເພິ່ນ, ເພິ່ນຍ້ຳເຕືອນພວກເຂົາໃນຕອນທ້າຍວ່າ, *"ແລະພຣະເຈົ້າຂອງເຮົາຈະຊົງໂຜດປະທານສາຣະພັດທີ່ພວກເຈົ້າຂາດຢູ່ນັ້ນຈາກຊັບອັນຮຸ່ງເຮືອງຂອງພຣະອົງໃນພຣະເຢຊູຄຣິດ" (ຟລປ 4:19).*

**3. ພຣະອົງເສີມສ້າງເຮົາໃໝ່.** ດ້ວຍພຣະເຈົ້າ, ເຮົາໄດ້ຮັບການນຳພາແລະການຈັດຫາໃຫ້, ແຕ່ ພວກເຮົາຍັງໄດ້ຮັບການເສີມສ້າງໃໝ່ອີກ. ຜູ້ຂຽນເພງສັຣເສີນບັນລະຍາຍເຖິງ "ປ່າຫຍ້າອັນຂຽວສົດ"-ບ່ອນພັກຜ່ອນ ແລະ ຈັດຫາໃຫ້-ແລະ "ບໍ່ນ້ຳງຽບສງັດ"- ແຫຼ່ງຂອງການເສີມຄວາມສົດຊື່ນຄືນໃໝ່. ອີກເທື່ອນຶ່ງ, ມີພຽງການສະຖິດນຳຂອງພຣະເຈົ້າຢູ່ໃນຊີວິດເຮົາເທົ່ານັ້ນ ພວກເຮົາຈຶ່ງສາມາດມາເຖິງບ່ອນຟື້ນຟູນີ້ໄດ້.

ການສະຖິດນຳຂອງພຣະເຈົ້ານຳເອົາອິສຣະພາບ, ຄວາມຍິນດີມາໃຫ້ເຮົາ, ແລະປົດປ່ອຍເຮົາອອກຈາກການສູ້ຊົນຂອງເຮົາ. ພຣະອົງຮູ້ສິ່ງທີ່ເຮົາຕ້ອງການ, ເວລາໃດເຮົາຕັດສິນໃຈຢຸດການສູ້ຊົນແລະເລີ່ມວາງໃຈ, ພວກເຮົາກໍຈະໄດ້ຮັບການບັນເທົາທີ່ເຮົາຕ້ອງການ. ມີແຕ່ການສະຖິດນຳຂອງພຣະເຈົ້າເທົ່ານັ້ນທີ່ຈະພາເຮົາໄປເຖິງບ່ອນທີ່ມີການຟື້ນຟູ.

## 2. <u>ເພງສັຣເສີນ 23:4-5</u>.

*[4]ຂ້າແດ່ພຣະຜູ້ເປັນເຈົ້າ ເຖິງແມ່ນວ່າທາງຈະຜ່ານຄວາມມືດມົນອັນເລິກລັບ ຂ້ານ້ອຍກໍຈະບໍ່ຢ້ານ ເພາະວ່າພຣະອົງຊົງຢູ່ກັບຂ້ານ້ອຍ ໄມ້ຄ້ອນແລະໄມ້ເທົ້າທີ່ພຣະອົງຊົງໃຊ້ກໍຊ່ອຍໃຫ້ຂ້ານ້ອຍພົ້ນພັຍ [5]ພຣະອົງຊົງລ້ຽງດູຂ້ານ້ອຍຢ່າງອີ່ມໜຳສຳຣານ ທ່າມກາງສັດຕຣູທັງຫຼາຍ ພຣະອົງຊົງຕ້ອນຮັບຂ້ານ້ອຍໂດຍຖອກນ້ຳມັນຫອມໃສ່ເທິງຫົວຂ້ານ້ອຍ ແລະຊົງໃຫ້ຈອກຂອງຂ້ານ້ອຍເຕັມລົ້ນຢູ່.*

ຄວາມກັງວົນຂອງເຮົາບາງຄັ້ງກໍສາມາດກາຍເປັນຈິງເຊັ່ນ:

- ຕົກງານ.
- ຜົນການກວດພຍາດຈາກທ່ານໝໍ.
- ຄວາມສັມພັນແຕກຫັກ.

ໃນທີ່ສຸດ, ບໍ່ສຳຄັນວ່າບັນຫາຂອງເຮົາຈະເກີດມາຈາກຕົວເຮົາເອງ ຫຼື ຄົນອື່ນນຳມາໃຫ້. ມັນບໍ່ສຳຄັນວ່າຈະເປັນແບບສາທາຣະນະຫຼືສ່ວນຕົວ. ສິ່ງສຳຄັນແມ່ນພວກເຮົາບໍ່ໂດດດ່ຽວ. ການສະຖິດນຳຂອງພຣະເຈົ້າເຮັດໃຫ້ແຕກຕ່າງບໍ່ວ່າເຮົາກຳລັງປະເຊີນສະຖານະການໃດ.

ຖານະພຣະຜູ້ລ້ຽງຂອງເຮົາ, ພຣະເຈົ້າປົກປ້ອງເຮົາ. ບາງຄັ້ງພວກເຮົາອາດເດີນ "ທາງຜ່ານຄວາມມືດມົນຂອງເຫວເລິກ." ແຕ່ມັນແມ່ນໃນສະຖານະການເຫຼົ່ານີ້-ເມື່ອອັນຕະລາຍ ຫຼືແມ້ກະທັ້ງດັ່ງຄວາມຕາຍໃກ້ເຂົ້າມາ, ພວກເຮົາຢູ່ໃນຄວາມມືດມົນຂອງເຫວເລິກທີ່ເຮົາອາດພາບໄດ້-ພຣະເຈົ້າກຳລັງປົກປ້ອງເຮົາຢູ່. ພຽງແຕ່ ຜູ້ປະພັນຊີວິດເທົ່ານັ້ນທີ່ສາມາດຕິດຕາມເຮົາເມື່ອເຮົາຕົກຢູ່ໃນບ່ອນມືດມິດ ບ່ອນທີ່ຄວາມຕາຍແລະຄວາມກົວປົກຄອງເຮົາ.

ໃນຍາມອັນຕະລາຍແລະຢ້ານກົວ, ການຢູ່ນຳຂອງພຣະເຈົ້າປະທານການເລົ້າໂລມເຮົາ ໄມ້ຄ້ອນຂອງຜູ້ລ້ຽງອາດຖືກນຳມາໃຊ້ສຳລັບການປ້ອງກັນເໝືອນກັນ ດັ່ງດຽວກັນກັບອາວຸດຕ້ານທານການບຸກໂຈມຕີ. ພວກຜູ້ລ້ຽງແກະຖືກນຳມາໃຊ້ເພື່ອປ້ອງກັນການທຳລາຍ. ການຮູ້ວ່າພຣະຜູ້ລ້ຽງປົກປ້ອງເຮົາໃນເວລາ ຄວາມຢ້ານກົວ ແລະ ພັຍອັນຕະລາຍເກີດຂຶ້ນ ແມ່ນການເລົ້າໂລມອັນຍິ່ງໃຫຍ່.

| |
|---|
| ທ່ານຮັບການຄ້ຳປະກັນໂດຍການສະຖິດນຳຂອງພຣະເຈົ້າຢ່າງໃດໃນເວລາຍາກລຳບາກ? |

ການສະຖິດນຳຂອງພຣະເຈົ້ານຳຄວາມກ້າຫານມາໃຫ້ເຮົາເໝືອນກັນ. ບາງຄົນໃນພວກເຮົາອາດປະກົດວ່າກ້າຫານຫຼືທຳສີໜ້າໃຫ້ດູດີ, ແຕ່ໃນຊີວິດຈິງ, ພວກເຮົາມີຂີດຄວາມສາມາດຈຳກັດໃນການລຸກຂຶ້ນສູ້ຫຼືຕ້ານຍັນ. ທ່ານດາວິດຂຽນໄວ້ວ່າ, "ອັນຕະລາຍຂ້ານ້ອຍກໍບໍ່ຢ້ານ" ເວລາເພິ່ນເວົ້າເຖິງ "ຄວາມມືດມິດຂອງເຫວເລິກ" ຈົ່ງພິຈາຣະນາເຖິງຄວາມມືດມົນຂອງເຫວເລິກໃນຊີວິດຊຶ່ງພວກເຮົາຕ້ອງຜ່ານຜ່າ. ໃນຫຼາຍກໍຣະນີ, ເຮົາບໍ່ສາມາດເຮັດຫຍັງໄດ້ແທ້.

- ➢ ເວລາກວດພຍາດມາເຖິງ, ສິ່ງທີ່ເຮົາເຮັດໄດ້ກໍພຽງແຕ່ກິນຢາ...ແລະອະທິຖານ.
- ➢ ໃນເວລາການເງິນຂອງໂຮງງານຕົກຕ່ຳ, ສິ່ງທີ່ເຮົາເຮັດໄດ້ກໍພຽງແຕ່ເຮັດວຽກໜັກຂຶ້ນ...ແລະອະທິຖານ.
- ➢ ເວລາຄວາມສັມພັນຂອງເຮົາຢູ່ໃນເຂດສູນສລາຍ, ສິ່ງທີ່ເຮົາເຮັດໄດ້ກໍພຽງແຕ່ຮັກເລິກເຂົ້າ...ແລະອະທິຖານ.

ພວກເຮົາມີຊັຍຊະນະເມື່ອພຣະອົງຍ່າງນຳເຮົາ. ມະໂນພາບທີ່ທ່ານດາວິດໃຊ້ໃນຂໍ້ 5 ແມ່ນພາບຂອງການສເລີມສລອງ. ສັດຕຣູຖືກບັງຄັບໃຫ້ເບິ່ງຂນະທີ່ເຮົາສລອງ. ໂຕະກິນລ້ຽງອັນໃຫຍ່ໂຕໄດ້ຖືກຈັດໄວ້ຕໍ່ໜ້າພວກເຮົາ. ມັນເປັນງານລ້ຽງ, ຫົວເລາະແລະຍິນດີເພາະພຣະເຈົ້າຢູ່ນຳເຮົາ. ຈາກການເປັນທີ່ພໍອົກພໍໃຈ, ພວກເຮົາໄດ້ຮັບການທົດສົງດ້ວຍນ້ຳມັນຫອມ. ໃນເພງສັຣເສີນບົດ 23 ໝາຍສຳຄັນແມ່ນພວກເຮົາເປັນແຂກທີ່ໄດ້ຮັບກຽດ, ພຣະເຈົ້າແຍກພວກເຮົາໄວ້ສຳລັບພຣະອົງ. ແລະເວລາເຮົາຮ່ວມຮັບປະທານອາຫານກັບກະສັດ, ຈອກຂອງພວກເຮົາຈະບໍ່ເປົ່າຈັກເທື່ອ. ຄວາມຈິງ, ມັນຈະຖືກຖອກໃສ່ເພີ່ມຂຶ້ນດ້ວຍຄວາມອຸດົມສົມບູນຂອງພຣະເຈົ້າເກີນກວ່າພວກເຮົາຈະສາມາດຮັບໄດ້.

### 3. <u>ເພງສັຣເສີນ 23:6</u>.

*6ຄວາມດີແລະຄວາມຮັກຂອງພຣະອົງຈະຢູ່ກັບຂ້ານ້ອຍຕລອດຊົ່ວຊີວິດ. ແລະພຣະວິຫານຂອງພຣະອົງກໍຈະເປັນເຮືອນຢູ່ຂອງຂ້ານ້ອຍຕລອດໄປ.*

ເພງສັຣເສີນບົດ 23 ແມ່ນການເລົ້າໂລມເພາະມັນບອກເຮົາກ່ຽວກັບພຣະເຈົ້າແລະສິ່ງທີ່ພຣະອົງຈະກະທຳແທນເຮົາ. ສຳລັບຫຼາຍໆຄົນ, ຄຳຖາມອັນແທ້ຈິງຂອງເຂົາບໍ່ແມ່ນ "ພຣະເຈົ້າຈະເຮັດຫຍັງເພື່ອຂ້ານ້ອຍ?" ແຕ່ "ພຣະເຈົ້າຈະຮັກຂ້ານ້ອຍບໍ່?" ບາງຄົນກັງວົນເຖິງຄວາມບາບເກົ່າເປັນກຳແພງກີດຂວາງບໍ່ໃຫ້ໄດ້ຮັບຄວາມຮັກພຣະເຈົ້າ. ພຣະທັມເພງສັຣເສີນແມ່ນປຶ້ມເພງສຳຄັນທີ່ຊາວອິສຣາເອນໃຊ້ໃນເວລານະມັສການ. ເພງແຕ່ລະບົດຖືກນຳໃຊ້ເປັນສ່ວນນຶ່ງຂອງການນະມັສການອົງພຣະຜູ້ເປັນເຈົ້າແລະເປັນອຸປກອນການສອນຄົນເພື່ອເຕືອນເຂົາເຖິງສິ່ງທີ່ພຣະເຈົ້າໄດ້ກະທຳແທນເຂົາ. ເປັນທີ່ປະຈັກແຈ້ງວ່າ, ທ່ານດາວິດໄດ້ສອນເຮົາໃນເພງສັຣເສີນ 23 ໃຫ້ຮ້ອງວ່າ "ຄວາມດີແລະຄວາມຮັກ" ຂອງພຣະອົງຈະຢູ່ກັບພວກເຮົາ...ແລະຈະຢູ່ນຳເຮົາຕລອດຊີວິດ. ທ່ານດາວິດກ່າວວ່າ "ຄວາມດີແລະຄວາມຮັກຂອງພຣະເຈົ້າຈະຕິດຕາມເຮົາໄປທຸກວັນຕລອດຊີວິດ."

- ເວລາພວກເຮົາຮູ້ສຶກວ່າການທົດລອງຕາມຄຸບຈັບເຮົາ, ພຣະເຈົ້າບໍ່ງບອກວ່າພຣະອົງຈະເອົາຊະນະໃຈເຮົາ.
- ເວລາຄວາມເຈັບປວດອ້ອມຮອບເຮົາທຸກມູມ, ອົງພຣະຜູ້ເປັນເຈົ້າຊົງຢູ່ນໍາເພື່ອເຊັດນໍ້າຕາແລະເອົາຊະນະໃຈເຮົາ.
- ເວລາຊີວິດຫຍຸ້ງຍາກແລະພວກເຮົາບໍ່ຮູ້ຈັກເອົາຊະນະຄວາມເຈັບປວດຂອງເຮົາ, ພຣະຜູ້ລ້ຽງຊົງສະຖິດນໍາເພື່ອພາເຮົາໄປສູ່ຄວາມຮັກຂອງພຣະອົງ.

ຊື່ນຶ່ງຂອງພຣະເຢຊູທີ່ຂ້ອຍມັກທີ່ສຸດແມ່ນ "ເອມານູເອັນ." ໃນເຣື່ອງການກໍາເນີດຂອງພຣະເຢຊູ, ເທວະດາຕົນນຶ່ງໄດ້ບອກໂຢເຊັບໃນຄວາມຝັນວ່າຈົ່ງຮັບມາຣີອາມາເປັນເມັຍຂອງລາວ. ໂດຍໃຊ້ພຣະທັມຄັມພີເດີມ ຄໍາທໍານວາຍຈາກ ເອຊາຢາ 7:14, ເທວະດາໄດ້ບອກໂຢເຊັບວ່າ ເຂົາຈະເອີ້ນຊື່ບຸດນັ້ນວ່າ "ເອມານູເອັນ," ແປວ່າ (ພຣະເຈົ້າຊົງສະຖິດຢູ່ກັບພວກເຮົາທັງຫຼາຍ)" (ມທ 1:20-23). ນີ້ເປັນຄວາມຄິດເລົ້າໂລມທີ່ດີທີ່ສຸດໃນທຸກຊີວິດ: ພຣະເຈົ້າຊົງຕິດຕາມເຮົານັບແຕ່ຫ້ອງບັນລັງໃນສວັນ, ຮອດໃຊ້ຊີວິດໃນດິນກັບເຮົາ, ແລະ ພຣະອົງຈະບໍ່ລໍຊ້າໃນການຕິດຕາມເຮົາ. ເພາະພຣະອົງປະສົງຢູ່ນໍາເຮົາ!

ພຣະເຈົ້າຊົງປະສົງວ່າພວກເຮົາຈະຢູ່ກັບພຣະອົງເໝືອນກັນ. ນັ້ນແມ່ນສາເຫດທີ່ພຣະອົງຕາມຫາເຮົາ. ພຣະເຈົ້າປະສົງໄດ້ກາຍເປັນພຣະຜູ້ລ້ຽງຂອງທ່ານແລະປົກປ້ອງທ່ານໃນເຫວເລິກແລະມືດມົນຂອງຊີວິດ. ນີ້ແມ່ນເພາະການສະຖິດນໍາຂອງພຣະອົງພວກເຮົາຈຶ່ງໄດ້ຮັບຄວາມຫວັງແລະຄວາມກ້າຫານ. ການບໍ່ຊົງປ່ອຍປະຊົງຕິດຕາມເຮົາມາສເມີຄວາມຮັກໄດ້ກາຍເປັນການຊ່ອຍເຫຼືອຢູ່ນໍາຊີວິດເຮົາຕລອດ. ແລະໂດຍຄວາມດີຂອງພຣະອົງ, ພວກເຮົາຈະໄດ້ຮັບປະທານອາຫານຮ່ວມໂຕະພຣະຣາຊາຕລອດໄປ.

| ມີທາງໃດແດ່ທີ່ກຸ່ມຂອງພວກເຮົາສາມາດຊ່ວຍກັນເອົາຊະນະຄວາມກັງວົນໄດ້? |
|---|

## ນໍາໃຊ້ໃນຊີວິດ

ທ່ານຈະດໍາເນີນຊີວິດໃນຄວາມວາງໃຈໃນພຣະເຈົ້າຢ່າງໃດ? ຈົ່ງເລືອກການນໍາໃຊ້ຂໍ້ໃດຂໍ້ນຶ່ງຕໍ່ໄປນີ້:

- **ຈົ່ງລະບຸ.** ຈົ່ງຊີ້ບອກສິ່ງທີ່ທ່ານມັກກັງວົນທີ່ສຸດ. ຈົ່ງປິ້ນບັນຊີນັ້ນໃຫ້ເປັນບັນຊີການອະທິຖານ, ວາງໃຈວ່າພຣະອົງຈະທໍາງານໃນແຕ່ລະສະຖານະການ.
- **ຈົ່ງທ່ອງຈໍາ.** ຖານະເປັນຜູ້ຕໍ່ຕ້ານຄວາມກັງວົນ, ຈົ່ງທ່ອງຈໍາ ຟລປ 4:6-7: "ຢ່າທຸກຮ້ອນໃຈດ້ວຍສິ່ງໃດເລີຍແຕ່ຈົ່ງທູນເຣື່ອງ ຄວາມປາຖນາຂອງພວກເຈົ້າທຸກຢ່າງຕໍ່ພຣະເຈົ້າ ດ້ວຍການໄຫວ້ວອນ, ແລະ ການອ້ອນວອນຂໍ, ພ້ອມກັບການຂອບພຣະຄຸນ. ແລ້ວສັນຕິສຸກອັນມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄິດຂອງເຈົ້າທັງຫຼາຍໄວ້ໃນພຣະເຢຊູຄຣິດ."
- **ຈົ່ງຊູຄວາມກ້າຫານ.** ສໍາລັບບາງຄົນທີ່ກັງວົນ, ຈົ່ງອະທິຖານກັບເຂົາ. ຊ່ອຍເຂົາໃຫ້ວາງໃຈໃນພຣະເຈົ້າ ໃນສະພາບການໃດກໍແລ້ວແຕ່ທີ່ເຂົາປະເຊີນຢູ່ໂດຍການເປັນແບບຢ່າງໃນການວາງໃຈຈົນໝົດສິ້ນ ໃນຄວາມຮັກຫ່ວງໃຍຂອງພຣະເຈົ້າ.

ມັນມີສິ່ງທີ່ຕ້ອງກັງວົນເລື້ອຍໆຢູ່ໃນໂລກນີ້. ແຕ່ພວກເຮົາຮັບໃຊ້ພຣະເຈົ້າທີ່ເຮັດໃຫ້ການສະຖິດນໍາຂອງພຣະອົງເປັນທີ່ຮູ້ຈັກ, ເພື່ອເຮົາສາມາດຕາມພຣະອົງອອກຈາກຄວາມກັງວົນຂອງເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**